ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ　　　　　　　　　　　　ເລກທີ 2196/ຮສສ

ນະຄອນຫຼວງວຽງຈັນ, ວັນທີ 20 JUN 2016

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ວ່າດ້ວຍການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 4 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງຄະນະຮັບຜິດຊອບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.

## ລັດຖະມົນຕີ ຕົກລົງ:

## ໝວດທີ I
## ບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຄວາມໝາຍ, ຄວາມສຳຄັນ, ຫລັກການ, ມາດຕະຖານ, ວິທີ, ຂັ້ນຕອນ ແລະ ການຊີ້ນຳ-ນຳພາຕໍ່ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫລວງວຽງຈັນ, ແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ອົງການປົກຄອງບ້ານ ນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ແນໃສ່ສຶກສາອົບຮົມສະມາຊິກຄອບຄົວ ແລະ ປະຊາຊົນພາຍໃນບ້ານ ມີສະຕິຕື່ນຕົວໃນການອອກແຮງງານ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃຫ້ມີຄວາມເຂັ້ມແຂງ.

### ມາດຕາ 2 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

**ແຮງງານ** ໝາຍເຖິງພະລັງງານທັງທາງດ້ານຮ່າງກາຍ ແລະ ມັນສະໝອງຂອງມະນຸດທີ່ນຳໃຊ້ເຂົ້າໃນການເຮັດວຽກທີ່ກໍ່ໃຫ້ເກີດຜົນທາງດ້ານເສດຖະກິດ-ສັງຄົມ.

**ກຳລັງແຮງງານ** ໝາຍເຖິງ ບຸກຄົນທີ່ມີອາຍຸ ແຕ່ 14 ປີ ຫາ 60 ປີ ຊຶ່ງສາມາດອອກແຮງງານໄດ້.

**ສະຫວັດດີການສັງຄົມ** ໝາຍເຖິງ ກົນໄກ ຫລື ຮູບແບບການຊ່ວຍເຫລືອ ເຊິ່ງກັນ ແລະ ກັນ ເພື່ອຕອບສະໜອງປັດໄຈຄວາມຕ້ອງການອັນພື້ນຖານທີ່ຈຳເປັນສຳລັບການດຳລົງຊີວິດຂອງປະຊາຊົນ.

**ຄອບຄົວພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ** ໝາຍເຖິງ ກຳລັງແຮງງານພາຍໃນຄອບຄົວ ທີ່ມີອາຍຸ ແຕ່ 14-60 ປີ ມີວຽກເຮັດງານທຳໃດໜຶ່ງ ຖືກຕ້ອງຕາມລະບຽບກົດໝາຍ ແລະ ຄອບຄົວມີຊີວິດການເປັນຢູ່ທີ່ດີ.

**ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ** ໝາຍເຖິງ ກຳລັງແຮງງານພາຍໃນບ້ານ ທີ່ມີອາຍຸແຕ່ 14-60 ປີ ມີວຽກເຮັດງານທຳໃດໜຶ່ງທາງດ້ານຮ່າງກາຍ ແລະ ມັນສະໝອງ ທີ່ກໍ່ໃຫ້ເກີດຜົນທາງດ້ານເສດຖະກິດ ແລະ ມີກອງທຶນ ຫລື ກົນໄກ ການຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃດໜຶ່ງ ພາຍໃນບ້ານ.

**ມາດຕາ 3 ຄວາມໝາຍຂອງການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ເປັນຂະບວນການແຂ່ງຂັນຈັດຕັ້ງ ແລະ ເຄື່ອນໄຫວເພື່ອສົ່ງເສີມມູນເຊື້ອດຸໝັ່ນໃນການອອກແຮງງານ ທຳມາຫາກິນ ຂອງປະຊາຊົນ ພາຍໃນບ້ານ ໃຫ້ສອດຄ່ອງກັບລະບຽບກົດໝາຍ; ເສີມຂະຫຍາຍນ້ຳໃຈເອື້ອເຟື້ອເພື່ອແຜ່ ທີ່ເປັນມູນເຊື້ອອັນດີງາມຂອງແຕ່ລະທ້ອງຖິ່ນໃຫ້ໄດ້ຮັບການພັດທະນາ ແລະ ກາຍເປັນສ່ວນໜຶ່ງຂອງລະບົບການປົກປ້ອງສັງຄົມ ໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ.

**ມາດຕາ 4 ຄວາມສຳຄັນຂອງການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ມີຄວາມສຳຄັນດັ່ງນີ້:

1. ເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການຈັດຕັ້ງປະຕິບັດມາດຕະຖານການພັດທະນາ (2016-2020) ຂອງລັດຖະບານ.

2. ເປັນການສົ່ງເສີມສະຕິການອອກແຮງງານ ຂອງປະຊາຊົນພາຍໃນບ້ານ ໃຫ້ມີຄວາມຮູ້ຄວາມສາມາດ, ມີສີມື, ມີລະບຽບວິໄນ ແລະ ເປັນເຈົ້າການໃນການຄຸ້ມຄອງແຮງງານລາວ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

3. ເປັນການສົ່ງເສີມຈິດໃຈອາລິຍະທຳທີ່ເອື້ອເຟື້ອຂອງປະຊາຊົນພາຍໃນບ້ານໃຫ້ມີຄວາມສາມັກຄີປອງດອງ.

4. ເປັນວຽກງານທີ່ພົວພັນກັບຫລາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ ເຊິ່ງຕ້ອງດຳເນີນເປັນແຕ່ລະບາດກ້າວ ໂດຍຕິດພັນກັບຂະບວນການລວມຂອງການສ້າງບ້ານພັດທະນາ.

**ມາດຕາ 5 ຫລັກການຂອງການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນຖານຫລັກການ ດັ່ງນີ້:

- ຮັບປະກັນໃຫ້ປະຊາຊົນ ທີ່ເປັນກຳລັງແຮງງານພາຍໃນບ້ານມີວຽກເຮັດງານທຳ,ໄດ້ຮັບການພັດທະນາສີມື, ມີລາຍໄດ້ທີ່ສົມເຫດສົມຜົນ ແລະ ມີການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ.
- ຮັບປະກັນໃຫ້ຄວາມສະເໝີພາບ, ຄວາມສາມັກຄີເອື້ອເຟື້ອ ທີ່ເປັນປະເພນີອັນດີງາມຂອງປະຊາຊົນພາຍໃນບ້ານໄດ້ຮັບການສົ່ງເສີມຢ່າງກວ້າງຂວາງ.
- ຮັບປະກັນການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນພາຍໃນບ້ານ ໄດ້ເຂົ້າຮ່ວມການຈັດຕັ້ງປະຕິບັດແຜນການບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຢ່າງທົ່ວເຖິງ.
- ຮັບປະກັນການບຳເພັງ ແລະ ຄຸ້ມຄອງທີ່ເປັນເອກະພາບແຕ່ກະຊວງ ຮສສ ລົງຮອດອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໂດຍສະເພາະຂັ້ນເມືອງ ແລະ ບ້ານ.

## ໝວດທີ II
## ມາດຕະຖານ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ

**ມາດຕາ 6 ມາດຕະຖານຄອບຄົວພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ຄອບຄົວພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ເປັນຄອບຄົວທີ່ປະຕິບັດໄດ້ມາດຕະຖານ ດັ່ງລຸ່ມນີ້:

1. ສະມາຊິກຄອບຄົວ ທີ່ມີອາຍຸ ແຕ່ 14-60 ປີ ໄດ້ຮັບການສຶກສາອົບຮົມ, ຮຽນຮູ້ລະບຽບກົດໝາຍດ້ານແຮງງານ ແລະ ສະຫວັດດີການສັງຄົມ ກວມ ອັດຕາສ່ວນ 80% ຂຶ້ນໄປ.

2. ກຳລັງແຮງງານພາຍໃນຄອບຄົວ ທີ່ມີອາຍຸ ແຕ່ 14-60 ປີ ມີວຽກເຮັດງານທຳໃດໜຶ່ງຖືກຕ້ອງຕາມລະບຽບກົດໝາຍ.

3. ສະມາຊິກພາຍໃນຄອບຄົວໄດ້ເປັນສະມາຊິກກອງທຶນຊ່ວຍເຫລືອຊຶ່ງກັນ ແລະ ກັນໃດໜຶ່ງ, ຄອບຄົວມີຄວາມສາມັກຄີ ແລະ ມີຊີວິດການເປັນຢູ່ທີ່ດີ.

**ມາດຕາ 7 ມາດຕະຖານບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ບ້ານພັດທະນາດ້ານແຮງງານ ແລະສະຫວັດດີການສັງຄົມ ເປັນບ້ານທີ່ປະຕິບັດໄດ້ບັນດາມາດຕະຖານ ດັ່ງລຸ່ມນີ້:

1. ປະຊາຊົນພາຍໃນບ້ານ ທີ່ມີອາຍຸ ແຕ່ 14-60 ປີ ໄດ້ຮັບການສຶກສາອົບຮົມ, ຮຽນຮູ້ລະບຽບກົດໝາຍດ້ານແຮງງານ ແລະ ສະຫວັດດີການສັງຄົມ ກວມອັດຕາສ່ວນ 80% ຂຶ້ນໄປ.

2. ມີຜູ້ຮັບຜິດຊອບວຽກງານແຮງງານ ແລະ ສະຫວັດດີການສັງຄົມ.

3. ມີປຶ້ມບັນທຶກຂໍ້ມູນສະຖິຕິ ດ້ານແຮງງານ ແລະ ສະຫວັດດີການສັງຄົມ ທີ່ເປັນລະບົບ.

4. ກຳລັງແຮງງານພາຍໃນບ້ານທີ່ມີອາຍຸ ແຕ່ 14-60 ປີ ມີວຽກເຮັດງານທຳ ຕາມຄວາມຮູ້ຄວາມສາມາດ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

5. ມີການຄຸ້ມຄອງແຮງງານລາວ ແລະ ແຮງງານຕ່າງປະເທດທີ່ມາອອກແຮງງານຢູ່ພາຍໃນບ້ານຖືກຕ້ອງຕາມກົດໝາຍ.

6. ປະຊາຊົນພາຍໃນບ້ານມີຊີວິດການເປັນຢູ່ທີ່ດີ ແລະ ມີກອງທຶນ ຫລື ກົນໄກການຊ່ວຍເຫລືອເຊິ່ງກັນ ແລະ ກັນໃດໜຶ່ງພາຍໃນບ້ານ.

## ໝວດທີ III
## ວິທີການສ້າງບ້ານພັດທະນາ
## ດ້ານແຮງງານ ແລະ ສະຫວັດດີການສັງຄົມ

**ມາດຕາ 8 ຂັ້ນຕອນການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມຕ້ອງດຳເນີນຕາມຂັ້ນຕອນດັ່ງລຸ່ມນີ້:

**1. ການກະກຽມ**

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຕ້ອງຄົ້ນຄວ້າກຳແໜດຈຸດປະສົງ, ມາດຕະຖານ, ຂັ້ນ

ຕອນ ແລະ ວິທີຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເພື່ອເກັບກຳຂໍ້ມູນສ້າງແຜນການກ່ຽວກັບການສ້າງຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີການສົມທົບກັບຫ້ອງການທີ່ກ່ຽວຂ້ອງຂອງອົງການປົກຄອງເມືອງ ແລະ ອົງການປົກຄອງບ້ານ.

- ຄົ້ນຄວ້າກຳແໜ້ນສະພາບຮອບດ້ານຂອງບ້ານເປົ້າໝາຍ, ກຳລັງແຮງງານ ທີ່ມີອາຍຸ ແຕ່ 14–60 ປີ ພາຍໃນບ້ານ, ອາຊີບຂອງກຳລັງແຮງງານ, ການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດພາຍໃນບ້ານ ແລະ ການເຂົ້າເປັນສະມາຊິກຂອງກອງທຶນຊ່ວຍເຫລືອ ເຊິ່ງກັນ ແລະ ກັນ ຫລື ການເປັນສະມາຊິກປະກັນສຸຂະພາບໃດໜຶ່ງ.

- ເນື້ອໃນແຜນການສ້າງ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຕ້ອງກຳນົດແຈ້ງຈຸດປະສົງ ລະດັບຄາດໝາຍ, ຈຳນວນຄອບຄົວ, ເນື້ອໃນ, ເວລາຈັດຕັ້ງປະຕິບັດ ແລະ ການແບ່ງຄວາມຮັບຜິດຊອບໃຫ້ຫົວໜ້າຄອບຄົວ, ຜູ້ຮັບຜິດຊອບວຽກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນບ້ານ ແລະ ຫົວໜ້າໜ່ວຍ ເພື່ອຕິດຕາມກວດກາ ຢ່າງຈະແຈ້ງ ເພື່ອນຳສະເໜີເຈົ້າເມືອງ ພິຈາລະນາຮັບຮອງ. ພາຍຫລັງທ່ານເຈົ້າເມືອງເຊັນຮັບຮອງແລ້ວ ຫ້ອງການ ຮສສ ເມືອງ ຕ້ອງສົ່ງແຜນການສະບັບໜຶ່ງ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ ແລະ ແຂວງ ເພື່ອເປັນບ່ອນອີງໃນການຕິດຕາມຊຸກຍູ້ດ້ານວິຊາການ.

- ຕ້ອງກະກຽມບັນດາເອກະສານ, ປັດໃຈຕ່າງໆ ແລະ ປະສານສົມທົບກັບແຕ່ລະພາກສ່ວນຢ່າງຄ່ອງຕົວ ເພື່ອຮັບປະກັນ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ.

**2. ການຈັດຕັ້ງຮ່ຳຮຽນເອກະສານ**

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງສົມທົບອົງການປົກຄອງບ້ານ ຈັດຕັ້ງຮ່ຳຮຽນເນື້ອໃນຂໍ້ຕົກລົງສະບັບນີ້ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ຢ່າງເລິກເຊິ່ງ.

- ແຕ່ລະຄອບຄົວ ແລະ ປະຊາຊົນພາຍໃນບ້ານ ຕ້ອງເປັນເຈົ້າການບຸກບືນ ຄົ້ນຄວ້າມາດຕະຖານ, ສ້າງຄອບຄົວ ແລະ ບ້ານຂອງຕົນ ໃຫ້ກາຍເປັນບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

**3. ການຊຸກຍູ້, ຕິດຕາມ ແລະ ກວດກາ**

- ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ ລົງຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ.

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ລົງຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດເປັນປົກກະຕິ.

- ອົງການປົກຄອງບ້ານ, ຜູ້ຮັບຜິດຊອບວຽກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນບ້ານ ແລະ ຫົວໜ້າໜ່ວຍ ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ຂອງແຕ່ລະຄອບຄົວ ເປັນປົກກະຕິ.

**4. ການປະເມີນ ແລະ ຮັບຮອງ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ສົມທົບອົງການປົກຄອງບ້ານຈັດຕັ້ງປະເມີນຜົນການສ້າງຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

- ອົງການປົກຄອງບ້ານ ນຳພາຜູ້ຮັບຜິດຊອບວຽກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນບ້ານ, ຫົວໜ້າໜ່ວຍ, ຫົວໜ້າຄອບຄົວ ເພື່ອດຳເນີນການປະເມີນ ຕາມມາດຕະຖານທີ່ໄດ້ກຳນົດໄວ້ ເພື່ອລາຍງານ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ.

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງນຳສະເໜີຜົນການປະເມີນ ຕາມການລາຍງານຂອງອົງການປົກຄອງບ້ານ ບົນພື້ນຖານການເຫັນດີເປັນເອກະພາບກັບພາກສ່ວນກ່ຽວຂ້ອງຂອງເມືອງ ເພື່ອນຳສະເໜີເຈົ້າເມືອງເຊັນຮັບຮອງ ແລະ ອອກໃບຢັ້ງຢືນຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 9 ວິທີການສ້າງ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ແມ່ນປະຕິບັດຕາມວິທີການດັ່ງນີ້:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ຕົກລົງ ແລ້ວ ມອບໃຫ້ ຫ້ອງການກະຊວງ ເປັນເຈົ້າການສົມທົບບັນດາກົມກ່ຽວຂ້ອງ ສ້າງຄູ່ມື, ຈັດຝຶກອົບຮົມວິທີການ ຈັດຕັ້ງປະຕິບັດ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຮັບຜົນດີ.

2. ຫ້ອງການກະຊວງ ຮສສ, ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ ນໍາເອົາເນື້ອໃນຂໍ້ຕົກລົງສະບັບນີ້ອອກໂຄສະນາທາງສື່ມວນຊົນ ເຮັດໃຫ້ປະຊາຊົນບັນດາເຜົ່າຮັບຮູ້ ແລະ ຕື່ນຕົວເຂົ້າຮ່ວມຈັດຕັ້ງປະຕິບັດ.

3. ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ, ຫ້ອງການ ຮສສ ເມືອງ ແລະ ອົງການປົກຄອງບ້ານ ເປັນເຈົ້າການຄົ້ນຄວ້າ, ຈັດຕັ້ງຜັນຂະຫຍາຍເນື້ອໃນ ແລະ ວິທີການຈັດຕັ້ງປະຕິບັດ ໃຫ້ເປັນແຜນການ, ແຜນງົບປະມານ ແລະ ໂຄງການລະອຽດ ຢູ່ແຕ່ລະຂັ້ນຕາມພາລະບົດບາດຂອງຕົນ.

4. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ສົມທົບອົງການປົກຄອງບ້ານ ຕ້ອງເລີ່ມຈາກບ້ານທີ່ມີເງື່ອນໄຂ ແລະ ມີຄວາມພ້ອມດ້ານຕ່າງໆ ໂດຍເຮັດໄປຕາມຂັ້ນຕອນ ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10 ການຈັດພິທີປະກາດບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ສົມທົບກັບອົງການປົກຄອງບ້ານ ເພື່ອກະກຽມເນື້ອໃນ ແລະ ວຽກງານຕ່າງໆ ໃຫ້ແກ່ການຈັດພິທີປະກາດບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

- ການຈັດພິທີປະກາດ ແລະ ມອບໃບຍັ້ງຢືນ ໃຫ້ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ເຮັດພ້ອມກັນກັບການປະກາດບ້ານພັດທະນາດ້ານອື່ນໆ ຫລື ອາດຈັດພິທີເປັນອັນສະເພາະກໍ່ໄດ້ ໂດຍອີງໃສ່ຄວາມສາມາດ ແລະ ສະພາບຕົວຈິງຂອງບ້ານ.

- ເປົ້າໝາຍຜູ້ເຂົ້າຮ່ວມໃນພິທີປະກາດບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ແມ່ນມອບໃຫ້ຫ້ອງການ ຮສສ ສົມທົບອົງການປົກຄອງເມືອງ ແລະ ບ້ານ ກໍານົດສະເພາະຜູ້ທີ່ກ່ຽວຂ້ອງ ເທົ່ານັ້ນເພື່ອບໍ່ໃຫ້ກະທົບຕໍ່ການອອກແຮງງານ ທໍາການຜະລິດຂອງປະຊາຊົນ ຫລື ການຮຽນຂອງນັກຮຽນ.

- ຄໍາຂວັນຕິດພິທີປະກາດ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ມີດັ່ງນີ້:

**+ ຊົມເຊີຍ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຢ່າງສຸດໃຈ !**

- ໃບຍັ້ງຢືນຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ແມ່ນ ຫ້ອງການ ກະຊວງ ຮສສ ເປັນຜູ້ກໍານົດ ຮູບແບບ, ຂະໜາດ, ເນື້ອໃນ ແລະ ຈັດພິມສົ່ງໃຫ້.

- ປ້າຍບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ແມ່ນມອບໃຫ້ອົງການປົກຄອງບ້ານເປັນຜູ້ຮັບຜິດຊອບ ໂດຍປະຕິບັດຕາມຂະໜາດທີ່ເໝາະສົມ ດັ່ງນີ້: **ຍາວ 1 ແມັດ, ກວ້າງ 0.40 ແມັດ, ພື້ນສີຟ້າ, ຕົວໜັງສືສີຂາວ, ຂະໜາດຂອງຕົວໜັງສື ໃຫ້ເໝາະສົມກັບຂະໜາດຂອງປ້າຍ.**

- ລາຍການດໍາເນີນພິທີປະກາດຮັບຮອງ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ປະກອບມີລາຍການຕົ້ນຕໍ ດັ່ງນີ້:

1. ເຄົາລົບທຸງຊາດ, ກະມະຈັດຕັ້ງກ່າວຈຸດປະສົງ ສະເໜີແຂກເຂົ້າຮ່ວມ ແລະ ອ່ານຂໍ້ຕົກລົງອະນຸມັດຈັດພິທີທາງການ ຂອງທ່ານເຈົ້າເມືອງ.

2. ອ່ານຜ່ານບົດປະເມີນ ຫລື ບົດສະຫລຸບ ແລະ ສະເໜີແຜນການສ້າງຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມຕໍ່ໜ້າ.

3. ອ່ານຂໍ້ຕົກລົງ, ມອບ-ຮັບໃບຢັ້ງຢືນຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

4. ຂັ້ນເທິງໂອ້ລົມ ແລະ ຕາງໜ້າອົງການປົກຄອງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຂຶ້ນຮັບຄຳໂອວາດຈາກຂັ້ນເທິງ.

5. ເປີດປ້າຍບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.

6. ຄະນະຈັດຕັ້ງກ່າວຂອບໃຈ ແລະ ປິດພິທີ.

## ໝວດທີ IV
## ການຊີ້ນຳ-ນຳພາຕໍ່ການສ້າງ
## ບ້ານ ພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ

**ມາດຕາ 11 ການຊີ້ນຳ-ນຳພາ**

ການຊີ້ນຳ-ນຳພາຕໍ່ການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ປະຕິບັດດັ່ງນີ້:

**1. ຂັ້ນກະຊວງ**

ຄະນະນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຜິດຊອບຊີ້ນຳທາງດ້ານວິຊາການ ໃນການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດທົ່ວປະເທດ.

**2. ຂັ້ນນະຄອນຫລວງວຽງຈັນ ແລະ ແຂວງ**

ແມ່ນຢູ່ພາຍໃຕ້ການຊີ້ນຳຂອງເຈົ້າຄອງນະຄອນຫລວງວຽງຈັນ, ເຈົ້າແຂວງ ຫລື ຮອງເຈົ້າຄອງນະຄອນຫລວງວຽງຈັນ ຫລື ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານ ຂົງເຂດວັດທະນະທຳ-ສັງຄົມ ຊຶ່ງມີພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງຮັບຜິດຊອບທາງດ້ານວິຊາການ ແລະ ມີການສົມທົບກັບອົງການປົກແຂວງທີ່ກ່ຽວຂ້ອງ.

**3. ຂັ້ນເມືອງ**

ແມ່ນຢູ່ພາຍໃຕ້ການຊີ້ນຳ-ນຳພາຂອງເຈົ້າເມືອງ ຫລື ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ຊຶ່ງມີຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຮັບຜິດຊອບທາງດ້ານວິຊາການ ແລະ ມີການສົມທົບກັບອົງການປົກຄອງເມືອງທີ່ກ່ຽວຂ້ອງ.

**4. ຂັ້ນບ້ານ**

ແມ່ນຂຶ້ນກັບການຊີ້ນຳຂອງນາຍບ້ານ ຊຶ່ງມີຜູ້ຮັບຜິດຊອບວຽກງານແຮງງານ ແລະ ສະຫວັດດີການສັງຄົມຂັ້ນບ້ານ ຊ່ວຍດ້ານວິຊາການ.

**ມາດຕາ 12 ຄວາມຮັບຜິດຊອບ ແລະ ການລາຍງານ**

- ຄະນະນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຕິດຕາມ, ສະຫລຸບ-ສັງລວມ ລາຍງານຂໍທິດຊີ້ນຳຈາກລັດຖະບານເປັນແຕ່ລະໄລຍະ.

- ຫ້ອງການກະຊວງ ເປັນໃຈກາງສົມທົບກັບບັນດາກົມອ້ອມຂ້າງກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເສນາທິການໃຫ້ຄະນະນຳກະຊວງ ຕິດຕາມ, ສັງລວມສະພາບການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດທົ່ວປະເທດ ຕາມຂໍ້ຕົກລົງສະບັບນີ້.

- ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ ຮັບຜິດຊອບໃນການສະໜອງບຸກຄະລາກອນລົງຊ່ວຍຫ້ອງການ ຮສສ ເມືອງ ແລະ ເປັນເຈົ້າການຕິດຕາມ, ສະຫລຸບການສ້າງຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດແຂວງຂອງຕົນ ເພື່ອລາຍງານຄະນະນຳຂອງນະຄອນຫລວງວຽງຈັນ, ແຂວງ ແລະ ກະຊວງ ຮສສ ເປັນປົກກະຕິ.

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ຮັບຜິດຊອບໃນການສົມທົບກັບອົງການປົກຄອງບ້ານຈັດຕັ້ງປະຕິບັດ ແລະ ເປັນເຈົ້າການຕິດຕາມ, ສະຫລຸບການສ້າງຄອບຄົວ ແລະ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດເມືອງຂອງຕົນ ເພື່ອລາຍງານຄະນະນຳຂອງ ເມືອງ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ ເປັນປົກກະຕິ.

ອົງການປົກຄອງບ້ານເປັນເຈົ້າການຈັດຕັ້ງປະຕິບັດ, ສະຫລຸບການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດບ້ານຂອງຕົນ ເພື່ອລາຍງານຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເປັນປົກກະຕິ.

ຜູ້ຮັບຜິດຊອບວຽກແຮງງານ ແລະ ສະຫວັດດີການສັງຄົມຂັ້ນບ້ານສົມທົບກັບຫົວໜ້າໜ່ວຍ ເປັນເຈົ້າການຕິດຕາມ, ສະຫລຸບການສ້າງຄອບຄົວ ແລະ ບ້ານ ພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມເພື່ອລາຍງານອົງການປົກຄອງບ້ານ ເປັນປົກກະຕິ.

**ມາດຕາ 13 ນະໂຍບາຍ ແລະ ການລົບຊື່ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ**

- ບ້ານທີ່ມີຜົນງານໃນການສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຈະໄດ້ຮັບການຍ້ອງຍໍຈາກອົງການປົກຄອງເມືອງ, ອົງການປົກຄອງແຂວງ ຫລື ກະຊວງ ຮສສ.
- ບ້ານທີ່ເປັນບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມຕໍ່ເນື່ອງ 3 ປີ ຂຶ້ນໄປ ຈະໄດ້ຮັບການພິຈາລະນາສະເໜີລັດຖະບານຍ້ອງຍໍ ຢ່າງເໝາະສົມ.
- ບ້ານທີ່ໄດ້ປະກາດເປັນບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໄປແລ້ວ ແຕ່ຫາກມີການລະເມີດມາດຕະຖານທີ່ກຳນົດໄວ້ ໃນໝວດທີ II ຂອງຂໍ້ຕົກລົງສະບັບນີ້ ຈະບໍ່ພິຈາລະນາມອບໃບຢັ້ງຢືນ ແລະ ປົດປ້າຍບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ຕະຫລອດປີນັ້ນ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການສ້າງແຜນການ ແລະ ແຜນງົບປະມານ**

- ຫ້ອງການກະຊວງ, ບັນດາກົມອ້ອມຂ້າງກະຊວງ ຄົ້ນຄວ້າສ້າງແຜນການ, ໂຄງການ ແລະ ງົບປະມານ ໃນແຕ່ລະປີ ຕາມພາລະບົດບາດຂອງຕົນ ເພື່ອຝຶກອົບຮົມດ້ານວິຊາການ ແລະ ສະໜັບສະໜູນງົບປະມານໃຫ້ທ້ອງຖິ່ນບາງສ່ວນ ພ້ອມທັງລົງຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດ ຕາມການແບ່ງຂັ້ນຄຸ້ມຄອງບໍລິຫານລັດ.
- ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ສ້າງແຜນການ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ວຽກງານສ້າງ ບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ສະເໜີຕໍ່ອົງການປົກຄອງຂັ້ນຂອງຕົນ ຈັດເຂົ້າແຜນພັດທະນາເສດຖະກິດ-ສັງຄົມ ເພື່ອສະເໜີສະພາປະຊາຊົນທ້ອງຖິ່ນ ພິຈາລະນາຮັບຮອງ ຕາມຄວາມສາມາດສະໜອງງົບປະມານແຕ່ລະປີ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມອ້ອມຂ້າງກະຊວງ, ອົງການປົກຄອງແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມນະຄອນຫລວງວຽງຈັນ, ແຂວງ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ອົງການປົກຄອງບ້ານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດຂອງລາວ ໃຫ້ໄດ້ຮັບຜົນດີ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ປອ. ຄໍາແພງ ໄຊສົມແພງ